# Universal Declaration of Human Rights - Lao ()

---

# ປະກາດສາກົນ
# ກ່ຽວກັບສິດຂອງມະນຸດ

## DECLARATION UNIVERSELLE

### DES DROITS DE L'HOMME

ວັນທີ ໑໐ ທັນວາ ຄ.ສ. ໑໙໔໘

ກອງປະຊຸມໃຫຍ່ສະຫະປະຊາຊາດ ໄດ້ລົບລອງ ແລະປະກາດສິດຂອງມວນມະນຸດ ຊຶ່ງພວກເຮົາໄດ້ຈັດພິມຂບດລອດບົດທັງການປະກາດອັນເປັນປະຫວັດການນີ້ ກອງປະຊຸມໃຫຍ່ໄດ້ຊີ້ແຈ້ງຕໍ່ສະມາຊິກທຸກທ່ານ ບໍ່ຈົ່ງປ່າໄດ້ປະລະເລີຍໂອກາດແລະວິທີທາງອັນໃດ ທີ່ງສາມາດຈະໄດ້ພິມໃບຍາວນາຄົດ, ເພື່ອເຜີຍແຜ່ໃຫ້ປະຊາຊົນໄດ້ລັບແຈກຈ່າຍ, ອ່ານແລະວິຈານສິ່ງສຳຄັນໃນໂຮງຮຽນ ແລະສະຖານສຶກສາໃດ ໆ ໂດຍບໍ່ຄຳນຶງເຖິງລັດທິ, ການເມືອງຂອງເຂົາ ຫລື ປະເທດໃດເລີຍ.

ສຳນັກງານຖແລງຂ່າວຂອງອົງການສະຫະປະຊາຊາດ ຄ.ສ. ໑໙໔໘.

# ບົດນຳ

ເຫັນວ່າ ການຮັບຮູ້ກຽດຕິສັກອັນມີປະຈຳຢູ່ຕົວບຸກຄົນ ໃນວົງສະກຸນຂອງມະນຸດທຸກໆ ຄົນ ແລະການຮັບຮູ້ສິດສເມີພາບແລະສະເຖັຽຣະພາບຂອງບຸກຄົນເຫລົ່ານັ້ນ ປະກອບເປັນຮາກຖານຂອງເສຣີພາບ ຍຸຕິທັມແລະສັນຕິພາບຂອງໂລກ.

ເຫັນວ່າການບໍ່ຮັບຮູ້ແລະໝິ່ນປະໝາດຕໍ່ສິດຂອງມະນຸດນັ້ນ ໄດ້ເປັນຕົ້ນເຫດໃຫ້ເກີດການກະທຳຢ່າງປ່າເຖື່ອນຊຶ່ງທຳໃຫ້ແຄັ້ນໃຈຕໍ່ມະໂນທັມຂອງມະນຸດແລະເຫັນວ່າການນຳມາຊຶ່ງໂລກມະນຸດທີ່ຈະມີອິສຣະໃນການສແດງຄວາມເວົ້າແລະຄວາມເຊື່ອຖື ຊຶ່ງຈະພົ້ນຈາກຄວາມຫວາດຫວັ່ນ ຢ້ານກົວ ແລະຍາກຈົນຂົ້ນແຄ້ນນັ້ນ ໄດ້ຖືກປະກາດວ່າເປັນຄວາມປາຖນາອັນຍອດຍິ່ງຂອງມະນຸດ.

ເຫັນວ່າເປັນຂໍ້ສຳຄັນທີ່ຕ້ອງມີຣະບຽບສິດປ້ອງກັນ ສິດທັ້ງຫລາຍຂອງມະນຸດເພື່ອບໍ່ໃຫ້ບຸກຄົນຖືກບັງຄັບໃຈ ໃຫ້ຕໍ່ສູ້ຄວາມບຽດບຽນຂົ່ມເຫັງແລະຄວາມກົດຂີ່ ອື່ນເຫງົ້າໂດຍເຫລືອວິໄສ.

ເຫັນ ວ່າ ເປັນ ຂໍ້ ສຳຄັນ ທີ່ ຕ້ອງ ເຊີດຊູສຳພັນທະໄມຕີຣະຫວ່າງປະເທດຊາດໃຫ້ດີຍິ່ງຂຶ້ນ:

ເຫັນວ່າໃນກົດໝາຍໂລກນັ້ນ ປະຊາຊົນແຫ່ງສະຫະປະຊາຊາດໄດ້ປະກາດຢືນຢັນຄວາມເຊື່ອຖືຂອງຕົນອີກ ໃນສິດສຳຄັນຂອງມະນຸດ ໃນກຽດຕິສັກ ແລະ ຄຸນຄ່າຂອງບຸກຄົນໃນຄວາມສເມີພາບຂອງສິດສ່ວນບຸກຄົນຜູ້ຊາຍຫລື ຜູ້ຍິງ ແລະເຫັນວ່າປະຊາຊົນເຫລົ່ານັ້ນ ໄດ້ປະກາດຕົນເປັນຜູ້ຈເຣີນພໍແລ້ວທີ່ຈະຊ່ວຍສນັບສນຸນຄວາມກ້າວໜ້າທາງດ້ານສັງຄົມ ແລະຈະຈັດຕັ້ງມາດຖານການຄອງຊີບໃຫ້ດີ ຍິ່ງຂຶ້ນໂດຍເສຣີພາບອັນກວ້າງຂວາງ:

ເຫັນວ່າຣັຖສະມາຊິກຕ່າງໆ ໄດ້ ໃຫ້ ຄວາມໝັ້ນສັນຍາ ວ່າຈະຮ່ວມມື ກັບອົງການສະຫະປະຊາຊາດ ເພື່ອ ຈັດດຳເນີນການ ໃຫ້ການນັບຖືສິດ ທັງຫລາຍຂອງມະນຸດແລະເສຣີພາບອັນສຳຄັນທັງມວນໄດ້ເປັນໄປທົ່ວໂລກຢ່າງປະຈັກ:

ເຫັນວ່າຄວາມເຂົ້າໃຈສິດແລະເສຣີພາບເຫລົ່ານັ້ນ ໂດຍທົ່ວກັນເປັນຂໍ້ສຳຄັນຍິ່ງເພື່ອປະຕິບັດຕາມສັນຍານັ້ນຢ່າງສົມບູນ:

ກອງປະຊຸມໃຫຍ່ຈຶ່ງປະກາດວ່າ:

ປະກາດສາກົນກ່ຽວກັບສິດຂອງມະນຸດສະບັບນີ້ ເປັນອຸດົມຄະຕິຮ່ວມກັນ

ທີ່ຈະໃຫ້ຊົນຊາດແລະປະເທດຊາດທຸກໆຊາດບັນລຸເຖິງ ເພື່ອຈະໃຫ້ບຸກຄົນທຸກຄົນ ແລະ ອົງການສັງຄົມທຸກອົງການ ຊຶ່ງຖືເອົາປະກາດນີ້ເປັນນິດໃສປະຈຳໃຈສເມີນັ້ນ ພະຍາຍາມຈັດການໃຫ້ມີຜູ້ນັບຖືສິດແລະເສຣີພາບເຫລົ່ານີ້ໃຫ້ກວ້າງຂວາງອອກໄປໂດຍການສຶກສາແລະການອົບຮົມ ແລະຈັດການໃຫ້ມີຜູ້ຮັບຮູ້ ແລະປະຕິບັດສິດແລະເສຣີພາບນີ້ທົ່ວໄປຢ່າງປະຈັກ ໂດຍໃຊ້ລະບຽບການຂັ້ນຂອງຊາດແລະລະຫວ່າງຊາດ ໃຫ້ໄດ້ຜົນເປັນລຳດັບຂຶ້ນໄປ; ການນັບຖືສິດແລະເສຣີພາບນັ້ນໃຫ້ດຳເນີນໄປໃນທ່າມກາງຊາວຊົນພົລະເມືອງຂອງບັນດາອັຄສະມາຊິກນັ້ນເອງ ພ້ອມກັບທັງຊາວຊົນພົລເມືອງຂອງບັນດາດິນແດນທີ່ຢູ່ໃນອຳນາດແຫ່ງກົດໝາຍ ຂອງອັດເຫລົ່ານັ້ນດ້ວຍ.

ມາດຕາ ໑. – ມະນຸດເກີດມາມີເສຣີພາບແລະສເມີໜ້າກັນໃນທາງກຽດຕິສັກແລະທາງສິດດ້ວຍ ມະນຸດ ມີສະຕິສົມປະຊັນຍະ (ຮູ້ດີຮູ້ຮ້າຍ) ແລະມີນະໃນທັມຈຶ່ງຕ້ອງປະພຶດຕົນຕໍ່ກັນໃນຖານພີ່ນ້ອງ

ມາດຕາ ໒. – ຂໍ້ ໑. ຄົນຜູ້ໃດກໍ່ອ້າງຕົນໄດ້ວ່າມີສິດ ແລະ ເສຣີພາບທຸກຢ່າງທີ່ໄດ້ປ່າວຮ້ອງຢູ່ໃນປະກາດສະບັບນີ້ໂດຍບໍ່ເລືອກໜ້າ ບໍ່ຈຳກັດເຊື້ອຊາດ ຜິວເນື້ອ ເພດ ພາສາ ສາສນາ ຄວາມຄິດຄວາມເຫັນໃນດ້ານການເມືອງຫລືອື່ນໆ ກຳເນີດແຫ່ງຊາດຫລືສັງຄົມ ຖານະການມີຊັບສົມບັດມາກ ຫລື ນ້ອຍ ຕະກູນ ຫລືຖານະອື່ນໆ.

ຂໍ້ ໒/ ອີກປະການນຶ່ງ ຈະບໍ່ຈຳກັດຢ່າງໃດໃນການແຕກຕ່າງກັນ ອັນເນື່ອງມາຈາກລະບຽບການເມືອງ ການປົກຄອງ ຫລືລະຫວ່າງຊາດຂອງປະເທດຫລື ດິນແດນ ຊຶ່ງບຸກຄົນຜູ້ໃດຜູ້ນຶ່ງສັງກັດຢູ່; ດິນແດນນັ້ນຈະເປັນເອກຣາດຢູ່ໃນຄວາມອາຣັກຂາຂອງມະຫາອຳນາດ ຫລື ບໍ່ມີອິສຣະ ຫລືຖືກລິດອະທິປະໄຕລົງໂດຍຈຳກັດກໍ່ຕາມ.

ມາດຕາ ໓. – ບຸກຄົນທຸກຄົນມີສິດດຳຣົງຊີວິດ ມີເສຣີພາບ ແລະຄວາມປອດໄພໃນຕົວ.

ມາດຕາ ໔. – ບໍ່ມີຜູ້ໃດເລີຍ ທີ່ຈະຕ້ອງຖືວ່າມີຍາການເປັນທາດ ແລະເປັນຂ້ອຍເປັນຂ້າ ການເປັນທາດແລະຄ້າທາດນັ້ນ ເປັນສິ່ງທີ່ຕ້ອງຫ້າມທຸກປະການ.

ມາດຕາ ໕. – ບໍ່ມີຜູ້ໃດເລີຍທີ່ຈະຖືກທໍຣະມານຕົວ ຖືກໂທດຫລືຂນານຢ່າງທາລຸນໂຫດຮ້າຍຢ່າງຂາດມະນຸສທັມຫລືເສື່ອມເສັຽກຽດຕິຍົດ.

ມາດຕາ ໖. – ບຸກຄົນບຸ້ໃດກໍ່ມີສິດ ທີ່ຈະໃຫ້ຮັບຮູ້ນິຕິໄສປະຈຳບຸກຄົນ ທີ່ປະຕິບັດກັນໃນທາງກົດໝາຍ ນະສະຖານທີ່ທຸກແຫ່ງ.

ມາດຕາ ໗. – ບຸກຄົນສເມີກັນຕໍ່ໜ້າກົດໝາຍ ແລະມີສິດທີ່ຈະໄດ້ຮັບຄວາມຄຸ້ມຄອງຈາກກົດໝາຍເທົ່າທຽມກັນ ໂດຍບໍ່ມີການແຕກຕ່າງ ທຸກຄົນມີສິດທີ່ຈະໄດ້ຮັບຄວາມຄຸ້ມຄອງເທົ່າທຽມກັນຕໍ່ການກະທຳໃດ ໆ ທີ່ຖືບຸກຄົນແຕກຕ່າງກັນອັນອາດເປັນການລະເມີດໃນປະກາດສະບັບນີ້ ແລະຕໍ່ການທ້າທາຍໃດ ໆ ທີ່ຈະຖືໃຫ້ແຕກຕ່າງກັນດັ່ງນີ້.

ມາດຕາ ໘. – ທຸກຄົນມີສິດທີ່ຈະຂໍເພິ່ງສານປະຈຳຊາດ ທີ່ມີອຳນາດ ເພື່ອຕ້ານການກະທຳອັນເປັນການລະເມີດສິດສຳຄັນ ຊຶ່ງລັດຖທັມມະນູນຫລືກົດໝາຍໄດ້ຮັບຮູ້ແລ້ວນັ້ນ.

ມາດຕາ ໙. – ບຸກຄົນໃດບໍ່ອາດຖືກຈັບກຸມຄຸມຂັງ ແລະເນຣະເທດໂດຍລຳພັງໃຈເລີຍ.

ມາດຕາ ໑໐. – ບຸກຄົນທຸກຄົນມີສິດເສມີເຕັມທີ່ ທີ່ຈະໃຫ້ສານອິສຣະແລະທ່ຽງທັມຟັງຄວາມກ່າວຫາຂອງຕົນຢ່າງຍຸຕິທັມແລະເປີດເຜີຍ ສານນັ້ນຈະພິຈາຣະນາຕົກລົງຕາມສິດ ແລະໜ້າທີ່ຂອງບຸກຄົນຫລືຕາມຄຳກ່າວຫາໃສ່ບຸກຄົນຜູ້ນັ້ນຢ່າງມີເຫດຜົນພຽງພໍໃນຜແນກອາຍາ.

ມາດຕາ ໑໑. – ຂໍ້ ໑./ ບຸກຄົນ ຜູ້ໃດ ທີ່ຖືກກ່າວຫາ ກະທຳຜິດກົດໝາຍ ນັ້ນຕ້ອງໃຫ້ຖືວ່າບໍ່ມີຄວາມຜິດ ຈົນກວ່າຄວາມຜິດຂອງຜູ້ນັ້ນຈະປາກົດຂຶ້ນຕາມກົດໝາຍໃນຣະຫວ່າງການດຳເນີນຄະດີຊ້ອງໜ້າປະຊາຊົນ ໃນຣະຫວ່າງນັ້ນຕ້ອງໃຫ້ບຸກຄົນຜູ້ກ່ຽວຂ້ອງໄດ້ມີປະກັນອັນຄວນໃນການຕໍ່ສູ້ຄະດີຂອງຕົນ.

ຂໍ້ ໒/ ຜູ້ໃດຜູ້ນຶ່ງຈະບໍ່ຖືກໂທດເລີຍ ໃນການກະທຳຫລືການຫລົງລືມຖ້າຫາກວ່າໃນຂນະທີ່ທຳນັ້ນເຫັນວ່າບໍ່ຜິດຕໍ່ກົດໝາຍຂອງຊາດ ຫລືຣະຫວ່າງຊາດໃນທຳນອງດຽວນັ້ນ ບໍ່ຄວນຈະປັບໄໝໃສ່ໂທດບຸກຄົນຜູ້ນັ້ນໃຫ້ໜັກກວ່າໂທດທີ່ໃຊ້ປະຕິບັດໃນຂນະທີ່ກະທຳຄວາມຜິດນັ້ນ.

ມາດຕາ ໑໒. – ບຸກຄົນຜູ້ໃດຈະຖືກຜູ້ອື່ນເຂົ້າແຊກແຊງກ່ຽວຂ້ອງໂດຍລຳພັງໃຈໃນການດຳເນີນຊີວິດຂອງຕົນເອງຄອບຄົວຂອງຕົນກ່ຽວຂ້ອງບ້ານທີ່ພັກອາໃສຂອງຕົນຫລືນຳຈົດໝາຍທີ່ຂຽນໄປມາຫາກັນ ຫລືຈະຖືກບຽດບຽນກຽດຕິຍົດແລະຊື່ສຽງຂອງຕົນນັ້ນບໍ່ໄດ້ເລີຍ ບຸກຄົນທຸກຄົນມີສິດທີ່ຈະຢູ່ໃນຄວາມຄຸ້ມຄອງຂອງກົດໝາຍເພື່ອຕ້ານການແຊກແຊງຫລືການບຽດບຽນ ເຊັ່ນນັ້ນ.

ມາດຕາ ໑໓.– ຂໍ້ ໑./ ບຸກຄົນທຸກຄົນ ມີສິດ ທີ່ຈະທ່ອງທ່ຽວໄປມາໂດຍເສຣີ ແລະເລືອກທີ່ຕັ້ງພູມລຳເນົາຢູ່ພາຍໃນຣັດໃດຣັດນຶ່ງ.

ຂໍ້ ໒./ ບຸກຄົນທຸກຄົນມີສິດທີ່ຈະຈາກປະເທດໃດປະເທດນຶ່ງໄປ ນັບທັງປະເທດຂອງຕົນດ້ວຍ ແລະກັບຄືນມາໃນປະເທດຂອງຕົນໄດ້.

ມາດຕາ ໑໔.– ຂໍ້ ໑/ ບຸກຄົນທຸກຄົນເມື່ອຖືກບຽດບຽນຂ້ຽວເຂັນນັ້ນມີສິດທີ່ຈະຫາບ່ອນອາໃສ ແລະຮັບເອົາທີ່ອາໃສໃນປະເທດອື່ນກໍໄດ້.

ຂໍ້ ໒/ ສິດສ່ວນນີ້ ບໍ່ໃຫ້ອ້າງອອກໄດ້ ໃນກໍຣະນີທີ່ຕ່າຣ້ອງຟ້ອງກ່າວຫາ ຫາກມີເຫດຍົນຕາມຄວາມ ຈິງອັນກ່ຽວແກ່ໂທດທາງກົດໝາຍຣະຫວ່າງຊາດ ຫລືກ່ຽວເຖິງການກະທຳທີ່ຂັດຕໍ່ຫລັກການ ແລະ ຄວາມມຸ້ງໝາຍຂອງສະຫະ-ປະຊາຊາດ.

ມາດຕາ ໑໕.– ຂໍ້ ໑./ ບຸກຄົນຜູ້ໃດກໍມີສິດທີ່ຈະມີສັນຊາດ.

ຂໍ້ ໒./ ບໍ່ມີຜູ້ໃດເພິ່ນທີ່ຈະຖືກຖອນສັນຊາດຂອງຕົນໂດຍລຳພັງໃຈ ຫລື ຖືກຖອນສິດໃນການປ່ຽນສັນຊາດ.

ມາດຕາ ໑໖.– ຂໍ້ ໑/ ຕັ້ງແຕ່ມີອາຍຸຮຸ່ນບ່າວສາວຂຶ້ນໄປ ຜູ້ຊາຍ ແລະຜູ້ຍິງໂດຍບໍ່ຈຳກັດສັນຊາດ ເຊື້ອຊາດ ຫລືສາສນາ ມີສິດທີ່ຈະສົມຣົດ (ແຕ່ງດອງເອົາກັນເປັນຜົວເມັຽ) ແລະສ້າງຄອບຄົວ ຄູ່ສົມຣົດມີສິດສເມີກັນໃນເມື່ອວິວາຫະມົງຄົນ ໃນຣະຫວ່າງຢູ່ກິນດ້ວຍກັນຖານຜົວເມັຽ ແລະໃນຂນະທີ່ມີການເລີກວິວາຫະມົງຄົນ.

ຂໍ້ ໒./ ການສົມຣົດ ຈະຕົກລົງກັນໄດ້ກໍແຕ່ໃນເມື່ອຄູ່ສົມຣົດໄດ້ໃຫ້ຄວາມສົມຍອມຢ່າງເຕັມໃຈແລະເດັດຂາດ.

ຂໍ້ ໓/ ຄອບຄົວເປັນວັດຖຸທັມມະຊາດ ແລະ ຫລັກສຳຄັນຂອງສັງຄົມ ແລະມີສິດທີ່ຈະໄດ້ຮັບຄວາມຄຸ້ມຄອງຈາກສັງຄົມແລະຈາກຣັດ.

ມາດຕາ ໑໗.– ຂໍ້ ໑./ ບຸກຄົນທຸກຄົນໂດຍລຳພັງ ຫລືໃນໝູ່ຄນະກໍດີມີສິດທີ່ຈະເປັນເຈົ້າຂອງໂດຍກັມມະສິດ.

ຂໍ້ ໒./ ຜູ້ໃດຈະຖອນກັມມະສິດຂອງບຸກຄົນນັ້ນ ໂດຍລຳພັງໃຈບໍ່ໄດ້ເລີຍ.

ມາດຕາ ໑໘ – ບຸກຄົນທຸກຄົນມີສິດເສຣີພາບ ໃນຄວາມຄິດໃນຄວາມເຊື່ອຖືແລະໃນການຖືສາສນາ: ສິດສ່ວນນີ້ກ່ຽວຂ້ອງດ້ວຍເສຣີພາບໃນການປ່ຽນສາສນາໃໝ່ ຫລືຄວາມເຊື່ອຖືຢ່າງຈິງໃຈ ແລະເສຣີພາບໃນການສແດງໃຫ້ເຫັນສາສນາຂອງຕົນຫລືຄວາມເຊື່ອຢ່າງຈິງໃຈຂອງຕົນໃນການສອນ ໂດຍ

ການກະທຳພິທີ ນະມັສການ ແລະປະຕິບັດທາງຈາຮີດປະເພນີ ການສແດງນັ້ນກະທຳໂດຍລຳພັງຫລືຮ່ວມໝູ່ຄນະກໍຕາມ.

<u>ມາດຕາ ໑໙.</u> – ບຸກຄົນທຸກຄົນມີສິດເສຣີພາບໃນການອອກແລະສແດງຄວາມຄິດຄວາມເຫັນ ດັ່ງນັ້ນຈຶ່ງເປັນອັນວ່າ ກ່ຽວແກ່ສິດທີ່ບໍ່ຕ້ອງວິຕົກໃນຄວາມຄິດຄວາມເຫັນຂອງຕົນ ແລະສິດທີ່ຈະສືບຫາຮັບເຜີຍແຜ່ຂ່າວແລະຄວາມຄິດໂດຍວິທີໃດກໍຕາມ ແລະໂດຍບໍ່ຈຳກັດເຂດແດນຂອງປະເທດ.

<u>ມາດຕາ ໒໐.</u> – ຂໍ້ ໑./ ບຸກຄົນທຸກຄົນມີສິດເສຣີພາບໃນການປະຊຸມແລະສະມາຄົມໃນທາງສັນຕິສຸກ.

ຂໍ້ ໒./ ບໍ່ມີຜູ້ໃດເລີຍທີ່ຈະຕ້ອງຖືກບັງຄັບ ໃຫ້ເຂົ້າເປັນສະມາຊິກໃນສະມາຄົມໃດສະມາຄົມນຶ່ງ.

<u>ມາດຕາ ໒໑.</u> – ຂໍ້ ໑./ ບຸກຄົນທຸກຄົນມີສິດທີ່ຈະຮ່ວມໃນການບໍຣິຫານກິຈການແຜ່ນດິນໃນປະເທດຂອງຕົນໂດຍຕົງກໍດີ ໂດຍຜູ້ຕາງໜ້າທີ່ໄດ້ເລືອກຕາມອຳເພີໃຈແລ້ວກໍດີ.

ຂໍ້ ໒./ ບຸກຄົນທຸກຄົນ ມີ ສິດທີ່ຈະຮັບຕຳແໜ່ງ ຣາຊການ ແຫ່ງ ປະເທດຂອງຕົນ ຕາມກົດຂະນິສເນີພາກ.

ຂໍ້ ໓ / ຄວາມເຈຕນາຂອງຊົນຊາດ ແມ່ນຫລັກສຳຄັນຂອງອຳນາດສາທາຣະນະ; ຄວາມເຈຕນານີ້ຕ້ອງໃຫ້ສແດງອອກມາຕາມພິທີຄັດເລືອກຢ່າງສຸຈຣິດຊຶ່ງຕ້ອງກະທຳກັນຕາມກຳນົດເວລາ ໂດຍມີການລົງຄະແນນສຽງສເມີກັນທົ່ວໄປແລະດ້ວຍພິທີລັບ ຫລືຕາມພິທີຄ້າຍກັນ ທີ່ໃຫ້ເສຣີພາບໃນການລົງຄະແນນສຽງ.

<u>ມາດຕາ ໒໒.</u> – ບຸກຄົນທຸກຄົນໃນຖານະ ທີ່ເປັນສະມາຊິກຂອງສັງຄົມມີສິດທີ່ຈະໄດ້ຮັບຄວາມປອດໄພດ້ານສັງຄົມ; ບຸກຄົນທຸກຄົນມີສິດທີ່ຈະໄດ້ຮັບຄວາມພໍໃຈໃນສິດທີ່ກ່ຽວແກ່ເສຖກິດ ສັງຄົມແລະວັທນະທັມ ຊຶ່ງຈຳເປັນແກ່ກຽດຕິສັກຂອງຕົນໂດຍເສຣີ ທັງນີ້ຍ້ອນຄວາມພະຍາຍາມຂອງຊາດ ແລະຄວາມຮ່ວມມືຣະຫວ່າງຊາດ ໂດຍຄຳນຶງເຖິງການວາງຣະບຽບ ແລະຊັບສົມບັດຂອງແຕ່ລະປະເທດ.

<u>ມາດຕາ ໒໓.</u> – ຂໍ້ ໑./ ບຸກຄົນທຸກຄົນມີສິດທີ່ຈະເຮັດວຽກເຮັດການເລືອກການງານຂອງຕົນຕາມອຳເພີໃຈ ຕາມກົດຂະນີອັນເປັນທັມ ແລະພໍໃຈ ແລະມີສິດທີ່ຈະໄດ້ຮັບຄວາມຄຸ້ມຄອງ ຕໍ່ການຂາດງານທຳ.

ຂໍ້ ໒./ ທຸກຄົນມີສິດທີ່ຈະໄດ້ຣັບຄ່າຈ້າງສົມກັບງານທີ່ທຳນັ້ນ ໂດຍບໍ່ມີການແຕກຕ່າງກັນ.

ຂໍ້ ໓./ ບຸກຄົນຜູ້ໃດທຳການງານ ມີສິດທີ່ຈະໄດ້ຣັບຣາງວັນ ຕາມຄວາມຍຸດຕິທັມແລະພໍໃຈເພື່ອລ້ຽງຊີບຂອງຕົນແລະຄອບຄົວໂດຍສົມກຽດແລະຖ້າເປັນການສົມຄວນ ກໍຈະໄດ້ຣັບຄວາມຄຸ້ມຄອງຈາກສັງຄົມ ໂດຍວິທີອື່ນ ໆ ອີກດ້ວຍ.

ຂໍ້ ໔./ ບຸກຄົນທຸກຄົນ ມີສິດທີ່ຈະຕັ້ງສະມາຄົມຂບກັບພັກພວກອື່ນ ໆ ແລະເຂົ້າເປັນສະມາຊິກ ເພື່ອປ້ອງກັນຜົນປໂຍດຂອງຕົນ.

ມາດຣາ ໒໔.– ບຸກຄົນທຸກຄົນ ມີສິດທີ່ຈະພັກຜ່ອນຢ່ອນໃຈ (ມີເວລາວ່າງ) ແລະເປັນຕົ້ນວ່າ ຂະນະເວລາທຳນັ້ນ ຈະໄດ້ຖືກກະໃຫ້ມີກຳນົດໄວ້ຕາມສົມຄວນສ່ວນຄ່າຈ້າງຣາຍວັນນັ້ນກໍຈະໄດ້ຄິດໃຫ້ສຳຣັບເວລາພັກຜ່ອນຕາມກຳນົດນັ້ນດ້ວຍ.

ມາດຣາ ໒໕.– ຂໍ້ ໑./ ບຸກຄົນທຸກຄົນມີສິດ ທີ່ຈະມີມາດຖານ ການຄອງຊີບພຽງພໍ ເພື່ອສຸຂະພາບແລະຄວາມສະບາຍຂອງຕົນ ແລະຄອບຄົວຂອງຕົນເປັນຕົ້ນວ່າ ສຳຣັບອາຫານການກິນ ເຄື່ອງນຸ່ງຫົ່ມ ທີ່ພັກອາໄສ ການຮັກສາຕົວຈາກແພດພ້ອມທັງການກຸ່ວເກ່ສັງຄົມທີ່ຈຳເປັນນັ້ນດ້ວຍ; ບຸກຄົນທຸກຄົນມີສິດທີ່ຈະໄດ້ຣັບການປອດໄພ ໃນເມື່ອຂາດທຳງານ ໃນເມື່ອມີຄວາມເຈັບປ່ວຍຖືກພິການເປັນໝ້າຍ ເຖົ້າແກ່ຊະຣາຫລືໃນສະຖານອື່ນ ເຊັ່ນຂາດພິທີທາງລ້ຽງຊີບ ອັນເນື່ອງມາຈາກເຫດການທີ່ເກີດຂຶ້ນຢ່າງບໍ່ເຈຕະນານັ້ນ.

ຂໍ້ ໒/ ມາດາຜູ້ຄອດບຸດ ແລະ ເດັກທີ່ເກີດໃໝ່ ມີສິດທີ່ຈະໄດ້ຣັບການຊົດຊ່ອຍແລະຄວາມຊ່ວຍເຫລືອໂດຍສະເພາະເດັກນ້ອຍທຸກຄົນທີ່ເກີດມາກາງວິວາຫະມົງຄົນ ຫລືນອກວິວາຫະມົງຄົນກໍດີ ມີສິດທີ່ຈະໄດ້ຣັບຄວາມຄຸ້ມຄອງຈາກສັງຄົມເຊັ່ນດຽວກັນ.

ມາດຣາ ໒໖ – ຂໍ້ ໑./ ບຸກຄົນທຸກຄົນ ມີສິດທີ່ຈະໄດ້ຣັບການອົບຮົມ ສຶກສາ ການອົບຮົມສຶກສານັ້ນຕ້ອງດຳເນີນໂດຍບໍ່ໃຫ້ມີການເສັຽຄ່າຢ່າງນ້ອຍຕ້ອງແມ່ນການສຶກສາຊັ້ນມູນ ແລະທີ່ເປັນເຄົ້າສຳຣັບມູນສຶກສາ ດຳເນີນໂດຍບໍ່ໃຫ້ມີການເສັຽຄ່າ ການສຶກສາວິຊາສະເພາະ ແລະອາຊີວະສຶກສາຕ້ອງໃຫ້ດຳເນີນທົ່ວໄປ. ສ່ວນອຸດົມສຶກສານັ້ນ ຕ້ອງເປີດໃຫ້ແກ່ບຸກຄົນທຸກຄົນ ໂດຍສເມີພາກເຕັມທີ່ ແລະຕາມຄຸນະວຸທິຂອງບຸກຄົນ.

ຂໍ້ ໒./ ການອົບຮົມສຶກສານັ້ນ ຕ້ອງໃຫ້ມຸ້ງໄປຫາຄວາມເບີກບານອັນເຕັມທີ່ຂອງບຸກຄະລິກແຫ່ງມະນຸດ ແລະມຸ້ງເຖິງຄວາມນັບຖືສິດຂອງມະນຸດ

ແລະເສຣີພາບສ່ວນສຳຄັນນັ້ນໃຫ້ມາກຍິ່ງຂຶ້ນ ການສຶກສາຕ້ອງສນັບສນຸນຄວາມເຂົ້າໃຈ ຄວາມປ່ອນຜັນ ແລະມິດພາບຣະຫວ່າງປະເທດຊາດທຸກປະເທດ ແລະໝູ່ກຸ່ມເຊື້ອຊາດ ຫລືສາສນາທຸກເຫລົ່າ ພ້ອມດ້ວຍຂຍາຍການດຳເນີນຂອງສະຫະປະຊາຊາດ ເພື່ອຮັກສາໄວ້ຊຶ່ງສັນຕິພາບ.

ຂໍ້ ໓./ ພໍ່ແມ່ມີສິດກ່ອນເພິ່ນ ທີ່ຈະເລືອກເອົາຊະນິດການສຶກສາທີ່ຈະໃຫ້ລູກຂອງຕົນໄດ້ຮັບນັ້ນ.

ມາດຕາ ໒໗. – ຂໍ້ ໑./ ບຸກຄົນທຸກຄົນ ມີສິດທີ່ຈະເຂົ້າຮ່ວມ ດຳເນີນການສຶກສາໃນໝູ່ຄນະໂດຍເສຣີ ຮັບຄວາມເພີດເພີນຈາກສິລປະ ແລະຮ່ວມມືຈັດການກ້າວໜ້າ ໃນດ້ານວິທະຍາສາດ ແລະຜົນປໂຍດທີ່ຈະໄດ້ມານັ້ນດ້ວຍ.

ຂໍ້ ໒./ ບໍ່ໃດກໍ່ມີສິດ ທີ່ຈະໄດ້ຮັບຄວາມຄຸ້ມຄອງຈາກຜົນປໂຍດທາງກາຍແລະໃຈອັນເກີດມາຈາກການດຳເນີນທຸກຢ່າງໃນດ້ານວິທະຍາສາດວັນນະຄະດີຫລືສິລປະ ຊຶ່ງຕົນເປັນເຈົ້າຂອງນັ້ນ.

ມາດຕາ ໒໘. – ບຸກຄົນທຸກຄົນມີສິດ ທີ່ຈະໃຫ້ມີຄວາມສງົບເກີດຂຶ້ນໃນດ້ານສັງຄົມ ແລະໃນດ້ານຕ່າງປະເທດ ເພື່ອຈະໃຫ້ມີສິດແລະເສຣີພາບທັງມວນ ທີ່ໄດ້ກ່າວໃນປະກາດສະບັບນີ້ ດຳເນີນໄປຢ່າງສັກສິດສົມບູນ.

ມາດຕາ ໒໙. – ຂໍ້ ໑./ ບຸກຄົນ ໃດກໍ່ມີໜ້າ ທີ່ຊຶ່ງຈະຕ້ອງ ປະຕິບັດຕໍ່ໝູ່-ຄນະໃນສັງຄົມ; ຄວາມຈະເຣີນແຫ່ງບຸກຄະລິກຂອງຕົນຈະດຳເນີນໄປໄດ້ຢ່າງເສຣີ ແລະສົມບູນ ກໍແຕ່ໃນວົງໝູ່ຄນະເທົ່ານັ້ນ.

ຂໍ້ ໒./ ໃນການປະຕິບັດສິດ ແລະເສຣີພາບຂອງຕົນນັ້ນ ບຸກຄົນໃດຕ້ອງດຳເນີນຢູ່ໃນຂອບເຂດແຫ່ງກົດໝາຍ ທີ່ຕັ້ງໄວ້ ນັ້ນທັງສິ້ນຢ່າງເໝາະສົມແກ່ຄວາມຕ້ອງການຂອງທັມມະຈະຣິຍາ ຄວາມສງົບຂອງສາທາຣະນະຊົນ ແລະສັນຕິສຸກຮ່ວມກັນ ໃນສັງຄົມປະຊາທິປະໄຕ.

ຂໍ້ ໓./ ໃນສະຖານໃດກໍດີ ສິດແລະເສຣີພາບເຫລົ່ານີ້ ບໍ່ຄວນໃຫ້ປະຕິບັດໄປໃນທາງຂັດຂວາງຕໍ່ຈຸດໝາຍແລະຫລັກການຂອງສະຫະປະຊາຊາດ.

ມາດຕາ ໓໐. – ຂໍ້ໃດຂໍ້ນຶ່ງໃນປະກາດສະບັບນີ້ ບໍ່ໃຫ້ເອົາຕີຄວາມໄປໃນທາງອັນກ່ຽວແກ່ສິດໃດສິດນຶ່ງ ສຳລັບຣັດໃດຣັດນຶ່ງ ໝູ່ຄນະໃດຄນະນຶ່ງ ຫລືບຸກຄົນໃດບຸກຄົນນຶ່ງທີ່ຈະດຳເນີນຫລືປະຕິບັດການອັນມຸ້ງທຳລາຍສິດ ແລະເສຣີພາບ ທັງມວນທີ່ແຈ້ງຢູ່ໃນປະກາດສະບັບນີ້.